# ກອງປະຊຸມຫຼາຍຝ່າຍ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI)

10 ພະຈິກ 2021, ສປປ ລາວ

## ຂໍ້ຜູກພັນສັນຍາ ການຜະລິດກະສິກຳ ຢູ່ ສປປ ລາວ: ຕອບສະໜອງຕາມທ່າອ່ຽງທີ່ເພີ່ມຂຶ້ນຂອງວຽກງານກະສິກຳ


ທ່ານ ແສງທອງ ສຸຂະທຳມະວົງ, ທີປຶກສາ RAI, IPD
ທ່ານ ປອ  ຣ໋ອບ ໂຄນ ທີປຶກສາ RAI, MRLG
sengthong_s@hotmail.com
robcole.mrlg@gmail.com


MRLG
MEKONG REGION LAND GOVERNANCE



Food and Agriculture Organization of the United Nations

ສະຫະພາບ ເອີຣົບ European Union

german cooperation DEUTSCHE ZUSAMMENARBEIT

Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ເປັນຫຍັງຂໍ້ຜູກພັນສັນຍາ ການຜະລິດກະສິກໍາ ຈິ່ງມີຄວາມສໍາຄັນ ? ແລະ ປະຈຸບັນມີຄວາມຈໍາເປັນແນວໃດ ?



- ຂໍ້ຜູກພັນສັນຍາ ການຜະລິດກະສິກໍາມີການຂະຫຍາຍຕົວຫລາຍ ແລະ ມີທ່າອ່ຽງທີ່ຈະສືບຕໍ່ການຂະຫຍາຍຕົວໃນຕໍ່ໜ້າ
- ຂໍ້ຜູກພັນສັນຍາການຜະລິດກະສິກໍາໄດ້ຮັບການຍອມຮັບວ່າເປັນທາງເລືອກໃນ**ການມີສ່ວນຮ່ວມຂອງຊາວກະສິກອນຂະໜາດນ້ອຍ** ທຽບກັບຮູບແບບການລົງທຶນແບບສໍາປະທານ
- ແຕ່ກໍມີ**ຄວາມສ່ຽງ**ໃນຫລາຍໆດ້ານ – ທໍາລາຍຮູບແບບການຜະລິດແບບດັ້ງເດີມຂອງຊາວກະສິກອນ, ມີຜົນກະທົບລວມຕໍ່ກັບການປູກຝັງ
- ການວິໄຈ ແລະ ຄົ້ນຄ້ວາໃນປະຈຸບັນ ມີນະໂຍບາຍທີ່ດີອັນໃດແດ່ທີ່ສາມາດຊ່ວຍສະໜັບສະໜູນຊາວກະສິກອນ ແລະ ນັກລົງທຶນ?

# ການເຊື່ອມໂຍງ CF ກັບຄຳແນະນຳຂອງ ອາຊຽນ ກ່ຽວກັບ  ASEAN-RAI 2

- ສົ່ງເສີມຮູບແບບການລົງທຶນທີ່ຊາວກະສິກອນຂະໜາດນ້ອຍ ມີສ່ວນຮ່ວມຫລາຍຂຶ້ນ
- ສັນຍາການຜະລິດລະຫວ່າງຜູ້ຜະລິດ ແລະ ຜູ້ເກັບຊື້ ມີຄວາມໂປ່ງໃສ ແລະ ຍຸດຕິທຳ
- ສົ່ງເສີມການຮັບຮູ້ສິດ ແລະ ພັນທະ ໃນສັນຍາການຜະລິດກະສິກຳ



# ບັນຫາຫລັກທີ່ກ່ຽວຂ້ອງກັບນະໂຍບາຍ ?

- ການເຮັດສັນຍາການຜະລິດກະສິກຳສ່ວນຫລາຍແມ່ນບໍ່ເປັນທາງການ/**ປາກເປົ່າ** → ສິ່ງເຫລົ້ານີ້ກໍສາມາດປະຕິບັດໄດ້ດີ ຖ້າມີຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນ, ແຕ່ກໍຈະມີຄວາມສ່ຽງຕໍ່ຊາວກະສິກອນຂະໜາດນ້ອຍ(NIER 2020)
- ການເຮັດສັນຍາການຜະລິດກະສິກຳແບບບໍ່ເປັນທາງການຍັງໝາຍຄວາມວ່າ ນັກລົງທຶນອາດຈະດຳເນີນທຸລະກິດ ໂດຍບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງລັດ, ຂາດການຕິດຕາມກວດກາ ຫລື ບໍ່ມີຂໍ້ມູນດ້ານການລົງທຶນ
- ກົດໝາຍຂໍ້ຜູກພັນໃນ ແລະ ນອກ ສັນຍາ ປີ1990( ປັບປຸງປີ 2008) ບໍ່ໄດ້ກຳນົດຊັດເຈນກ່ຽວກັບ ຂໍ້ຜູກພັນສັນຍາການຜະລິດກະສິກຳ

**ບັນຫາທີ່ສຳຄັນກ່ຽວກັບຂໍ້ຜູກພັນສັນຍາການຜະລິດກະສິກຳ ຢູ່ໃນລາວ ແມ່ນກ່ຽວ ກັບຄວາມເອກະພາບກັນ:**

- ➢ ແຕ່ລະພາກສ່ວນຈະມີການແບ່ງຄວາມຮັບຜິດຊອບຄືແນວໃດ ? ຂະແໜງການຂອງລັດ/ນັກລົງທຶນ/ຊາວກະສິກອນ
- ➢ ຄວນຈະມີການກຳນົດສິ່ງໃດແດ່ໃນຂໍ້ຜູກພັນສັນຍາການຜະລິດກະສິກຳ ? ຂໍ້ແນະນຳ/ຮ່າງແບບຢ່າງສັນຍາສາມາດຊ່ວຍແກ້ບັນຫານີ້ໄດ້ບໍ
- ➢ ຖ້າມີການບໍ່ປະຕິບັດຕາມສັນຍາ ຈະມີວິທີການແກ້ໄຂແນວໃດ ? ກົນໄກການແກ້ໄຂຂໍ້ຂັດແຍ່ງ

# ຂໍ້ຄິດເຫັນ ຈາກ ພາກລັດ, ນັກລົງທຶນ ແລະ ຊາວກະສິກອນ ກ່ຽວກັບການຈັດຕັ້ງ ປະຕິບັດ ຂໍ້ຜູກພັນສັນຍາການຜະລິດກະສິກຳ

| ຂໍ້ມູນຈາກການໄປຢັ້ງຢາມການລົງທຶນພາກສະໜາມ,ນະຄອນຫລວງພະບາງ 2021 | |
|---|---|
| **ຊາວກະສິກອນ** | • ບໍ່ຄຸ້ນເຄີຍກັບຂໍ້ກຳນົດຕ່າງໆ ໃນສັນຍາ ແລະ ເຕັກນິກການຜະລິດ;<br>• ບໍ່ເຂົ້າໃຈກ່ຽວກັບບົດບາດຂອງລັດຖະບານ ແລະ ຂະບວນການດຳເນີນເອກະສານທີ່ກ່ຽວຂ້ອງ;<br>• ຄວາມສະເໝີພາບບົດບາດຍິງ-ຊາຍໃນການເຊັນສັນຍາ;<br>• ຊາວກະສິກອນຈຳນວນໜຶ່ງມັກໃຫ້ມີການຮັບປະກັນລາຄາຂັ້ນຕຳ◌່ສຸດ, ບາງສ່ວນຕ້ອງການເລືອກຜູ້ທີ່ຈະຂາຍໃຫ້ |
| **ນັກລົງທຶນ** | • ຍັງຂາດຂັ້ນຕອນການຈົດທະບຽນຢ່າງເປັນລະບົບກ່ຽວກັບ CF;<br>• ກັງວົນກ່ຽວກັບການຂາຍທີ່ບໍ່ເປັນໄປຕາມສັນຍາ/ຂາຍໃຫ້ຜູ້ອື່ນເພາະມີການເກັບຊື້ຈາກນາຍໜ້າ, ຊາວກະສິກອນ ຕ້ອງການໃຫ້ມີການສຳລະສິນຄ້າໄວ ແລະ ບໍ່ມີປະສົບການການ ແລະ ເຂົ້າໃຈກ່ຽວກັບ CF<br>• ກັງວົນກ່ຽວກັບການມີສ່ວນຮ່ວມທີ່ບໍ່ພຽງພໍ ແລະ ບໍ່ສາມາດເຂົ້າເຖິງການຜະລິດໄດ້ຢ່າງພຽງພໍ;<br>• ຊາວກະສິກອນມີຄວາມເຂົ້າໃຈບໍ່ເລິກເຊິ່ງກ່ຽວກັບເນື້ອໃນຂອງສັນຍາໃນເບື້ອງຕົ້ນ;<br>• ຢາກໃຫ້ລັດຖະບານໂຄສະນາກ່ຽວກັບນະໂຍບາຍຕໍ່ຊາວກະສິກອນ,ໃຫ້ການສະໜັບສະໜູນການຜະລິດຕາມສັນຍາ |
| **ລັດຖະບານ** | • ກັງວົນກ່ຽວກັບການມີສ່ວນຮ່ວມໃນການຮ່າງ ແລະ/ຫຼື ສະຫລຸບສັງລວມສັນຍາ ລະຫວ່າງ ພາກສ່ວນ ທີ່ກ່ຽວຂ້ອງ;<br>• ລັດຖະບານຈຳເປັນຕ້ອງໄດ້ຍົກສູງ ຄວາມຮັບຮູ້ຂອງປະຊາຊົນ ກ່ຽວກັບຄວາມສຳຄັນຂອງ ການເຮັດສັນຍາ;<br>• ນະໂຍບາຍຄວນມີຄວາມຊັດເຈນ ແລະ ແທດເໝາະ ກັບທຸກພາກສ່ວນ ລວມທັງນັກລົງທຶນ ແລະ ຊາວກະສິກອນ. |

# ສັງລວມຂໍ້ສະເໜີແນະ ຈາກບັນດາບົດຄົ້ນຄ້ວາກ່ຽວກັບຂໍ້ຜູກພັນສັນຍາການຜະລິດກະສິກຳ

| ປະເພດ | ຂໍ້ສະເໜີແນະ | ຄວາມຖີ່ຂອງຂໍ້ສະເໜີແນະ |
|---|---|---|
| ກົງຈັກການຈັດຕັ້ງ | * ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງອົງກອນຂອງລັດໃຫ້ຈະແຈ້ງ<br>* ສ້າງຄວາມເຂັ້ມແຂງ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງການຜະລິດກະສິກຳ ຕາມສັນຍາ | 11<br>8 |
| ກອບນິຕິກຳ & ສັນຍາ | * ສ້າງມາດຕະຖານ ແລະ/ຫຼື ປັບປຸງ ກອບລະບຽບ ແລະ ນິຕິກຳການຜະລິດກະສິກຳຕາມສັນຍາ<br>* ສ້າງມາດຕະຖານ ດ້ານຂໍ້ຂັດແຍ່ງ ແລະ ຂັ້ນຕອນການຮ້ອງທຸກ ທີ່ຈະແຈ້ງ ແລະ ຮັບປະກັນຄວາມຮັບຮູ້ກ່ຽວກັບສິດທິ<br>* ສ້າງແບບຢ່າງສັນຍາທີ່ງ່າຍດາຍ ແລະ ເຂົ້າໃຈງ່າຍ ກ່ຽວກັບເງື່ອນໄຂ, ສິດ ແລະ ພັນທະໃນສັນຍາ | 9<br>5<br>5 |
| ສະໜັບສະໜູນອົງກອນ | ສະໜັບສະໜູນການພັດທະນາ ແລະ ຄວາມສາມາດຂອງອົງກອນຊາວກະສິກອນ | 7 |
| ການສະໜັບສະໜູນທຸລະກິດກະສິກຳ | ສົ່ງເສີມການພັດທະນາທຸລະກິດດ້ານກະສິກຳ ແລະ ການປຸງແຕ່ງ ພາຍໃນ<br>ສ້າງຮູບແບບ ແລະ ປັບປຸງການຄຸ້ມຄອງການຄ້າຊາຍແດນ. | 6<br>6 |
| ສະໜັບສະໜູນຊາວກະສິກອນ | ການຝຶກອົບຮົມ/ ສ້າງຄວາມສາມາດ ໃນການເຈລະຈາ<br>ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການສົ່ງເສີມ | 4<br>4 |

# ສະຫລຸບ



**ການສ້າງຕິຕິກຳລຸ່ມກົດໝາຍກ່ຽວກັບ CF ເພື່ອແກ້ໄຂບັນຫາ ສະເພາະໜ້າ ຄວນຈະກວມເອົາບັນຫາລຸ່ມນີ້:**

1. ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ຈະແຈ້ງ ແລະ ສ້າງຄວາມອາດສາມາດໃຫ້ແກ່ອົງກອນໃນການຄຸ້ມ ຄອງ CF
2. ກຳນົດສິດ ແລະ ພັນທະຂອງຄູ່ສັນຍາໃຫ້ຈະແຈ້ງ( ເຊັ່ນ: ນຳ ໃຊ້ຮ່າງສັນຍາແບບຢ່າງ)
3. ກຳນົດກົນໄກການຮ້ອງທຸກເພື່ອແກ້ໄຂຂໍ້ຂັດແຍ່ງທາງສັນຍາ

→ ນະໂຍບາຍທີ່ສະທ້ອນໃຫ້ເຫັນຄວາມແຕກຕ່າງຂອງຮູບແບບຂໍ້ຜູກພັນ ສັນຍາການຜະລິດກະສິກຳ ໃນລາວ- ນັກລົງທຶນກໍຈະສາມາດຫາວິທີເຮັດວຽກ ຮ່ວມກັບຊາວກະສິກອນຂະໜາດນ້ອຍ, **ການປັບເຂົ້າກັນແມ່ນເປັນສິ່ງຈຳເປັນ**



# ຂໍຂອບໃຈ!

Food and Agriculture Organization of the United Nations

ສະຫະພາບ ເອີຣົບ
European Union

german cooperation
DEUTSCHE ZUSAMMENARBEIT

Implemented by

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH